ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ 1423

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ເລກທີ 1423 /ກຊສ

ນະຄອນຫຼວງວຽງຈັນ, ວັນທີ 25.ມີນາ.2021

# ແຈ້ງການ

ເຖິງ: - ທ່ານຫົວໜ້າພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ, ນະຄອນຫຼວງວຽງຈັນ.
- ທ່ານຫົວໜ້າຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ, ນະຄອນ ໃນຂອບເຂດທົ່ວປະເທດ.

ເລື່ອງ: ໃຫ້ໂຈະ ແລະ ກວດກາຄືນການອອກໜັງສືຢັ້ງຢືນການນຳໃຊ້ທີ່ດິນປ່າໄມ້ ໃຫ້ແກ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໃນເຂດ ທີ່ດິນປ່າສະຫງວນ, ທີ່ດິນປ່າປ້ອງກັນ ແລະ ທີ່ດິນປ່າຜະລິດ ໃນຂອບເຂດທົ່ວປະເທດ.

- ອີງຕາມ ມາດຕາ 44, 84, 119 ແລະ 160 ຂໍ້ 6 ຂອງກົດໝາຍວ່າດ້ວຍທີ່ດິນ ສະບັບປັບປຸງ ເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019;
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 232/ຫສນຍ, ລົງວັນທີ 12 ມີນາ 2021.

ໃນໄລຍະທີ່ຜ່ານມາສັງເກດເຫັນວ່າໄດ້ມີບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ບຸກລຸກ ຫຼື ຈັບຈອງທີ່ດິນ ແບບຊະຊາຍ ໂດຍບໍ່ຖືກຕ້ອງຕາມກົດໝາຍ ໃນເຂດ ທີ່ດິນປ່າສະຫງວນ, ທີ່ດິນປ່າປ້ອງກັນ ແລະ ທີ່ດິນປ່າຜະລິດ ພ້ອມດຽວກັນນັ້ນ ໃນບາງເຂດທີ່ປະຊາຊົນ ໄດ້ອາໄສ ແລະ ທຳການຜະລິດ ກ່ອນຂະແໜງການທີ່ກ່ຽວຂ້ອງ ກຳນົດເຂດເປັນທີ່ດິນປ່າໄມ້ ແລະ ພາກສ່ວນທີ່ກ່ຽວຂ້ອງ ໄດ້ອອກໃບຕາດິນ ຫຼື ອອກໜັງສືຢັ້ງຢືນການນຳໃຊ້ທີ່ດິນປ່າໄມ້ ໃຫ້ແກ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໃນເຂດດັ່ງກ່າວ ຊຶ່ງເປັນການລະເມີດກົດໝາຍ ຈຶ່ງເປັນສາເຫດໜຶ່ງເຮັດໃຫ້ການຄຸ້ມຄອງທີ່ດິນປ່າໄມ້ເກີດມີຫຼາຍບັນຫາສັບສົນ ຈາກບັນດາປະກົດການດັ່ງກ່າວ ບໍ່ສະເພາະແຕ່ເຮັດໃຫ້ລັດ ແລະ ສັງຄົມສ່ວນລວມເສຍຜົນປະໂຫຍດ ແຕ່ຍັງສ້າງຜົນກະທົບເຮັດໃຫ້ປ່າໄມ້ຖືກທຳລາຍ ແລະ ເນື້ອທີ່ປ່າໄມ້ຫຼຸດລົງ ທັງເປັນບັນຫາຫຍໍ້ທໍ້ທີ່ກຳລັງເຮັດໃຫ້ສັງຄົມ ຂາດຄວາມເຊື່ອໝັ້ນຕໍ່ອົງການຄຸ້ມຄອງທີ່ກ່ຽວຂ້ອງ. ສະນັ້ນ, ເພື່ອເປັນການເພີ່ມທະວີການຄຸ້ມຄອງທີ່ດິນປ່າໄມ້ ແລະ ຮັບປະກັນການປະຕິບັດພາລະບົດບາດຄຸ້ມຄອງຂອງລັດ ແລະ ຄວາມສັກສິດຂອງກົດໝາຍ ຢ່າງເຂັ້ມງວດ.

## ລັດຖະມົນຕີ ອອກແຈ້ງການ:

1. ໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ, ນະຄອນຫຼວງວຽງຈັນ ແລະ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງ, ນະຄອນ ໂຈະການອອກໜັງສືຢັ້ງຢືນການນຳໃຊ້ທີ່ດິນປ່າໄມ້ ໃຫ້ແກ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໃນເຂດ ທີ່ດິນປ່າສະຫງວນ, ທີ່ດິນປ່າປ້ອງກັນ ແລະ ທີ່ດິນປ່າຜະລິດ ໃນຂອບເຂດທົ່ວປະເທດ ເປັນການຊົ່ວຄາວກ່ອນ;

2. ສຳລັບການອອກໜັງສືຢັ້ງຢືນການນຳໃຊ້ທີ່ດິນປ່າໄມ້ ແກ່ໃຫ້ປະຊາຊົນທີ່ໄດ້ອາໄສ ແລະ ທຳການຜະລິດຢູ່ໃນເຂດທີ່ດິນປ່າໄມ້ ກ່ອນການກຳນົດເຂດດັ່ງກ່າວ ເປັນທີ່ດິນປ່າໄມ້ ແມ່ນໃຫ້ສືບຕໍ່ດຳເນີນໃນບາງເຂດທີ່ໄດ້ຕົກລົງໃຫ້ທົດລອງປະຕິບັດໂຄງການຮັບຮູ້ສິດນຳໃຊ້ທີ່ດິນປ່າໄມ້ໃຫ້ແກ່ປະຊາຊົນ ແຕ່ການປະຕິບັດນັ້ນຕ້ອງໃຫ້ສອດຄ່ອງກັບມາດຕາ 44 ຂອງກົດໝາຍວ່າດ້ວຍທີ່ດິນ ສະບັບປັບປຸງ ປີ 2019 ທີ່ໄດ້ກຳນົດໄວ້ວ່າ " ລັດ ຮັບຮູ້ການນຳໃຊ້ທີ່ດິນຂອງປະຊາຊົນທີ່ໄດ້ອາໄສ ແລະ ທຳການຜະລິດ ຢູ່ໃນເຂດທີ່ດິນປ່າໄມ້ ກ່ອນການກຳນົດເຂດດັ່ງກ່າວເປັນທີ່ດິນ

ປ່າໄມ້ ໂດຍມອບໃຫ້ກະຊວງກະສິກຳ ແລະ ປ່າໄມ້ ສົມທົບກັບກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ດຳເນີນການສຳຫຼວດ, ເກັບກຳຂໍ້ມູນ ແລະ ດຳເນີນການຈັດສັນດິນໃໝ່ ໃນເຂດທີ່ດິນປ່າໄມ້ ແລ້ວອອກໃບຢັ້ງຢືນການນຳໃຊ້ທີ່ດິນໃຫ້ຕາມກົດໝາຍ ພ້ອມທັງໃຫ້ປະຊາຊົນໃນເຂດດັ່ງກ່າວ ມີສ່ວນຮ່ວມໃນການປົກປັກຮັກສາປ່າໄມ້ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍປ່າໄມ້ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ ";

3. ນອກຈາກການອອກໃບຢັ້ງຢືນການນຳໃຊ້ທີ່ດິນປ່າໄມ້ ໃຫ້ແກ່ປະຊາຊົນ ທີ່ໄດ້ອາໄສ ແລະ ທຳການຜະລິດຢູ່ໃນເຂດທີ່ດິນປ່າໄມ້ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 44 ຂອງກົດໝາຍວ່າດ້ວຍທີ່ດິນ ສະບັບປັບປຸງ ປີ 2019 ນັ້ນ ແມ່ນຫ້າມອອກໜັງສືຢັ້ງຢືນການນຳໃຊ້ທີ່ດິນປ່າໄມ້ ໃຫ້ແກ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໂດຍບໍ່ຖືກຕ້ອງຕາມກົດໝາຍ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 160 ຂໍ້ 6 ຂອງກົດໝາຍວ່າດ້ວຍທີ່ດິນ ສະບັບດັ່ງກ່າວ;

4. ສຳລັບການອອກໜັງສືຢັ້ງຢືນການນຳໃຊ້ທີ່ດິນປ່າໄມ້ ໃຫ້ແກ່ບຸກຄົນ, ນິຕິບຸກຄົນ ຫຼື ຜູ້ທີ່ໄດ້ເຊົ່າ ຫຼື ສຳປະທານທີ່ດິນປ່າໄມ້ ເພື່ອດຳເນີນກິດຈະການຕ່າງໆ ຕາມການອະນຸຍາດຂອງ ລັດຖະບານ ຫຼື ກະຊວງກະສິກຳ ແລະ ປ່າໄມ້ ຫຼື ອົງການປົກຄອງ ແຂວງ, ນະຄອນຫຼວງວຽງຈັນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍປ່າໄມ້ ຫຼື ກົດໝາຍອື່ນທີ່ກ່ຽວຂ້ອງ ທີ່ໄດ້ອະນຸຍາດກ່ອນ ແລະ ຫຼັງອອກແຈ້ງການສະບັບນີ້ ແມ່ນໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ, ນະຄອນຫຼວງວຽງຈັນ ອອກໃບຕາດິນລັດໃຫ້ແກ່ຜູ້ເຊົ່າ ຫຼື ສຳປະທານທີ່ດິນປ່າໄມ້ນັ້ນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 119 ຂອງກົດໝາຍວ່າດ້ວຍທີ່ດິນ ສະບັບປັບປຸງ ປີ 2019;

5. ໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສົມທົບພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງວຽງຈັນ, ພະແນກການທີ່ກ່ຽວຂ້ອງຂັ້ນແຂວງ, ອົງການປົກຄອງຂັ້ນເມືອງ ແລະ ຫ້ອງການທີ່ກ່ຽວຂ້ອງຂັ້ນເມືອງ ກວດກາຄືນການຂຶ້ນທະບຽນອອກໃບຕາດິນ ຫຼື ການອອກໜັງສືຢັ້ງຢືນການນຳໃຊ້ທີ່ດິນປ່າໄມ້ ໃຫ້ແກ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໃນເຂດ ທີ່ດິນປ່າສະຫງວນ, ທີ່ດິນປ່າປ້ອງກັນ ແລະ ທີ່ດິນປ່າຜະລິດ ທີ່ຢູ່ໃນຄວາມຮັບຜິດຊອບທ້ອງຖິ່ນຂອງຕົນ ໃນໄລຍະຜ່ານມາ ແລ້ວຕ້ອງລາຍງານຄືນໃຫ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງວຽງຈັນ ກ່ອນວັນທີ 30 ເມສາ 2021 ເພື່ອສັງລວມລາຍງານຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ພ້ອມທັງຈະໄດ້ສົມທົບກັບກະຊວງກະສິກຳ ແລະ ປ່າໄມ້ ດຳເນີນການແກ້ໄຂ ແລະ ປະຕິບັດຕາມມາດຕາ 84 ຂອງກົດໝາຍວ່າດ້ວຍທີ່ດິນ ສະບັບປັບປຸງ 2019;

6. ແຈ້ງການສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ຈົນກວ່າຈະມີແຈ້ງການ ຫຼື ນິຕິກຳອື່ນປ່ຽນແທນ;

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອປະຕິບັດຕາມແຈ້ງການສະບັບນີ້ ຢ່າງເຂັ້ມງວດ.

ເຊັນແທນ ລັດຖະມົນຕີ

ທ.ບຸນຄຳ ວໍລະຈິດ

**ສຳເນົາສົ່ງ:**

| | |
|---|---|
| 1. ທ່ານ ລັດຖະມົນຕີ, ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ | 1 ສະບັບ ເພື່ອລາຍງານ; |
| 2. ທ່ານ ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ | 1 ສະບັບ ເພື່ອຊາບ; |
| 3. ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານເຈົ້າແຂວງ | 1 ສະບັບ ເພື່ອຊາບ; |
| 4. ເກັບມ້ຽນ | 1 ສະບັບ. |